ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------===== XXXX =====------

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 2018 /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 21/09/2012

# ແຈ້ງການ

ເຖິງ: ທ່ານຫົວໜ້າ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໃນຂອບເຂດທົ່ວປະເທດ.

ເລື່ອງ: ກຳນົດລາຄາເກັບຊື້ເຂົ້າເປືອກໜຽວ (ນາປີ ແລະ ນາແຊງ) ປະຈຳລຶກປີ 2012-2013.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 474/ນຍ, ລົງວັນທີ 18/10/2010, ວ່າດ້ວຍ ການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ;
- ອີງຕາມ ບົດແນະນຳ ການຈັດຕັ້ງປະຕິບັດ ດຳລັດ 474/ນຍ, ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ, ເລກທີ 1405/ອຄ.ຄພນ, ລົງວັນທີ 11/07/2012;
- ອີງຕາມ ບົດແນະນຳ, ເລກທີ 1514/ອຄ.ຄພນ, ວ່າດ້ວຍການຄຸ້ມຄອງລາຄາເຂົ້າຢູ່ພາຍໃນແຂວງ.

ເພື່ອເປັນການຊຸກຍູ້ສົ່ງເສີມການຜະລິດເຂົ້າ ໃຫ້ຂະຫຍາຍຕົວ ແລະ ກາຍເປັນສິນຄ້າເພື່ອລະກ້າວ ຮັບປະກັນທັງທາງດ້ານປະລິມານ ແລະ ຄຸນນະພາບ, ບໍ່ໃຫ້ມີການເອົາລັດເອົາປຽບຊຶ່ງກັນ ແລະ ກັນ ລະຫວ່າງ ຜູ້ຜະລິດ ແລະ ຜູ້ເກັບຊື້, ບໍ່ໃຫ້ມີການສວຍໂອກາດກົດໜ່ວງລາຄາເກັບຊື້ເຂົ້າເປືອກ ຢ່າງບໍ່ສົມເຫດສົມຜົນ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ປະຕິບັດ ດັ່ງນີ້:

1. ກຳນົດຂອບເຂດລາຄາຊີ້ນຳເກັບຊື້ເຂົ້າເປືອກໜຽວ (ນາປີ ແລະ ນາແຊງ) ປະຈຳລຶກປີ 2012-2013 ດັ່ງນີ້:

- ເກັບຊື້ນຳປະຊາຊົນ, ຊາວນາ ຜູ້ຜະລິດ, ລາຄາເກັບຊື້ຕ່ຳສຸດບໍ່ໃຫ້ຫຼຸດ <u>2.500 ກີບ/ກິໂລ;</u>

- ເກັບຊື້ນຳສະມາຄົມ ຫຼື ກຸ່ມໂຮງສີ, ຫົວໜ່ວຍທຸລະກິດທີ່ເຮັດຄັງແຮເຂົ້າ ແລະ ໂຮງສີທົ່ວໄປ ລາຄາເກັບຊື້ສູງສຸດບໍ່ໃຫ້ເກີນ <u>3.000 ກີບ/ກິໂລ.</u>

2. ລາຄາເກັບຊື້ເຂົ້າເປືອກ ທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ເທິງນີ້, ແມ່ນໃຫ້ອີງໃສ່ມາດຖານເງື່ອນໄຂ ແລະ ຄຸນນະພາບຂອງເຂົ້າ, ຊຶ່ງແມ່ນຜູ້ປະກອບການ (ຜູ້ຊື້) ແລະ ຜູ້ຜະລິດ (ຜູ້ຂາຍ) ເປັນຜູ້ເຈລະຈາຕົກລົງຊື້-ຂາຍນຳກັນ ຕາມສະພາບຕົວຈິງ, ໝາຍຄວາມວ່າລາຄາເກັບຊື້ແມ່ນໃຫ້ອີງຕາມຄຸນນະພາບຂອງເຂົ້າເປັນຫຼັກ, ຫຼີກເວັ້ນການກົດໜ່ວງລາຄາແບບບໍ່ມີເຫດມີຜົນ.

3. ການເກັບຊື້ເຂົ້າຕົວຈິງຂອງສອງກຳລັງ (ປກຊ-ປລກ), ແມ່ນໃຫ້ເກັບຊື້ນຳຫົວໜ່ວຍທຸລະກິດ, ສະມາຄົມ ຫຼື ກຸ່ມໂຮງສີ ທີ່ເຮັດຄັງແຮເຂົ້າ (ຖ້າມີ); ເກັບຊື້ນຳສະມາຄົມ ຫຼື ກຸ່ມໂຮງສີທົ່ວໄປ ພາຍໃນແຂວງຂອງຕົນ. ຖ້າຕົວເລກເກັບຊື້ຢູ່ພາຍໃນແຂວງດັ່ງກ່າວຫາກບໍ່ພຽງພໍຕາມແຜນການ, ກໍໃຫ້ສົມທົບເກັບຊື້ກັບແຂວງອື່ນ ທີ່ມີທ່າແຮງດ້ານການຜະລິດເຂົ້າໄດ້ຫຼາຍ ແລະ ເຄື່ອນຍ້າຍເຂົ້າ ເພື່ອມາສະໜອງໃຫ້ພຽງພໍຕາມຄວາມຕ້ອງການ.

4. ໃນແຂວງໃດ ທີ່ບໍ່ມີທຸລະກິດ, ສະມາຄົມ ຫຼື ກຸ່ມໂຮງສີ ທີ່ເຮັດຄັງແຮເຂົ້າ; ແມ່ນໃຫ້ສອງກຳລັງດັ່ງກ່າວນັ້ນ ເກັບຊື້ຈາກບັນດາໂຮງສີທົ່ວໄປ ຫຼື ຈະເກັບຊື້ໂດຍກົງຈາກຊາວນາ ຜູ້ຜະລິດກໍໄດ້, ອີງຕາມຄວາມສະດວກ ບົນພື້ນຖານລາຄາທີ່ໄດ້ກຳນົດໄວ້ໃນຂໍ້ 1 ແລະ ມາດຖານເງື່ອນໄຂທີ່ລະບຸໄວ້ໃນຂໍ້ 2 ເທິງນີ້.

5. ໃຫ້ເຜີຍແຜ່ແຈ້ງການສະບັບດັ່ງກ່າວນີ້ ເພື່ອແຈ້ງໃຫ້ສັງຄົມ ກໍຄືກຸ່ມໂຮງສີ/ສະມາຄົມ ຫຼື ທຸລະກິດທີ່ເຮັດທຸລະກິດຊື້-ຂາຍເຂົ້າ, ຊາວນາ ແລະ ສອງກຳລັງ (ປກສ-ປກຊ) ຢູ່ພາຍໃນແຂວງຮັບຊາບ ແລະ ຈັດຕັ້ງປະຕິບັດ ຕາມເນື້ອໃນຈິດໃຈຂອງແຈ້ງການສະບັບນີ້.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ຄ. ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ;

ສົມສະຫວາດ ສະແຫວງສຶກສາ

ບ່ອນນຳສົ່ງ:
- ຫ້ອງວ່າການລັດຖະບານ (ເພື່ອຊາບ);
- ຄະນະນຳກະຊວງ ອຄ (ເພື່ອຊາບ);
- ຫ້ອງວ່າການປົກຄອງແຂວງໃນທົ່ວປະເທດ (ເພື່ອຊີ້ນຳໃນການຈັດຕັ້ງປະຕິບັດ);